**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເລກທີ 2348/ກຕສ

ນະຄອນຫຼວງວຽງຈັນ, ວັນທີ 31 ສິງຫາ 2023

# ຄໍາສັ່ງ

## ວ່າດ້ວຍການສືບຕໍ່ຂຶ້ນທະບຽນເລກໝາຍໂທລະສັບ ຢູ່ ສປປ ລາວ

**ເຖິງ:** - ຫ້ອງການ, ກົມ, ສູນ, ສະຖາບັນ ແລະ ອົງການ ທີ່ສັງກັດໃນກະຊວງ ເຕັກໂນໂລຊີ ແລະ ການສື່ສານ;

- ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ;
- ບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ.

- ອີງຕາມກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ, ມາດຕາ 11 ການຂຶ້ນທະບຽນເລກໝາຍໂທລະຄົມມະນາຄົມ ແລະ ມາດຕາ 36 ພັນທະຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ, ເລກທີ 05/ສພຊ, ວັນທີ 16 ພະຈິກ 2021;
- ອີງຕາມດໍາລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເລກທີ 625/ນຍ, ວັນທີ 22 ຕຸລາ 2021;
- ອີງຕາມແຈ້ງການ ຂອງຫ້ອງວ່າການລັດຖະບານ ວ່າດ້ວຍການອະນຸມັດອອກຂໍ້ບັງຄັບຂຶ້ນທະບຽນຜູ້ຊົມໃຊ້ເລກໝາຍໂທລະສັບທົ່ວປະເທດ ເລກທີ 366/ສນຍ, ວັນທີ 06 ກັນຍາ 2018;
- ອີງຕາມຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບ, ເລກທີ 2347/ກຕສ, ວັນທີ 30 ສິງຫາ 2023.

ໃນໄລຍະຜ່ານມາ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍ ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ແລະ ບັນດານິຕິກໍາຕ່າງໆ ກ່ຽວກັບການຂຶ້ນທະບຽນເລກໝາຍໂທລະສັບ ຢ່າງຕັ້ງໜ້າ, ຜ່ານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ສາມາດບັນລຸຜົນສໍາເລັດຈໍານວນໜຶ່ງ, ຊຶ່ງປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານການຫັນເປັນດີຈີຕ້ອນ ຕາມວິໄສທັດ ຮອດປີ 2040 ຍຸດທະສາດ ຮອດປີ 2030 ແລະ ແຜນພັດທະນາເສດຖະກິດດີຈີຕ້ອນ ຮອດປີ 2025. ຕົວເລກສະຖິຕິຮອດວັນທີ 21 ສິງຫາ 2023 ເຫັນວ່າ ມີຜູ້ນໍາໃຊ້ຈໍານວນ 10.426.031 ເລກໝາຍ, ແຕ່ການຂຶ້ນທະບຽນສໍາເລັດ ພຽງແຕ່ 4.179.189 ເລກໝາຍ ຄິດເປັນ 40,08 ສ່ວນຮ້ອຍ, ສະນັ້ນ ຕ້ອງໄດ້ສືບຕໍ່ຂຶ້ນທະບຽນໃນຈໍານວນ 6.246.842 ເລກໝາຍ ຊຶ່ງເທົ່າກັບ 59,91 ສ່ວນຮ້ອຍ ໃຫ້ສໍາເລັດໃນທ້າຍປີ 2023 ນີ້.

ສະນັ້ນ, ເພື່ອເຮັດໃຫ້ການຂຶ້ນທະບຽນເລກໝາຍໂທລະສັບໃຫ້ສຳເລັດໃນທ້າຍປີ 2023, ຈຶ່ງອອກຄຳສັ່ງມາຍັງ ບັນດາ ຫ້ອງການ, ກົມ, ອົງການ, ສູນ, ສະຖາບັນ, ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ແລະ ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ປະຕິບັດ ດັ່ງນີ້:

**1. ການຈຳໜ່າຍ ແລະ ເປີດນຳໃຊ້ເລກໝາຍໂທລະສັບໃໝ່ ຕ້ອງສືບຕໍ່ການຂຶ້ນທະບຽນຕາມວິທີການດັ່ງລຸ່ມນີ້:**

1.1. **ເລີ່ມແຕ່ວັນທີ 01 ຕຸລາ 2023 ເປັນຕົ້ນໄປ** ໃຫ້ບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຂາຍເລກໝາຍໂທລະສັບມືຖື ແບບລາຍເດືອນ ແລະ ແບບຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030 ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຜ່ານຈຸດບໍລິການຂອງບັນດາບໍລິສັດທີ່ໄດ້ກຳນົດໄວ້ເທົ່ານັ້ນ. ການນຳໃຊ້ເລກໝາຍໂທລະສັບໃໝ່ ຕ້ອງໄດ້ຂຶ້ນທະບຽນເລກໝາຍໂທລະສັບໃຫ້ຖືກຕ້ອງ ແລະ ສຳເລັດ ຜ່ານແອັບພລິເຄຊັນ 3 ແກ໊ບ (3 Grab App) **ຈຶ່ງອະນຸຍາດໃຫ້ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເປີດໃຫ້ນຳໃຊ້ບໍລິການໄດ້;**

1.2. ບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງດຳເນີນການປັບປຸງຄືນລະບົບເຕັກນິກ ເລກໝາຍໂທລະສັບມືຖື ແບບລາຍເດືອນ ແລະ ແບບຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030 ເພື່ອຮັບປະກັນໃຫ້ເລກໝາຍໂທລະສັບທີ່ຢູ່ໃນທ້ອງຕະຫຼາດແຕ່ຍັງບໍ່ທັນໄດ້ເປີດນຳໃຊ້ ໃຫ້ຢູ່ໃນສະຖານະ ບໍ່ສາມາດເປີດນຳໃຊ້ ການໂທເຂົ້າ-ອອກ, ຮັບ-ສົ່ງ ຂໍ້ຄວາມສັ້ນ (sms) ແລະ ນຳໃຊ້ອິນເຕີເນັດໄດ້ ຈົນກ່ວາຈະຂຶ້ນທະບຽນສຳເລັດ ແລະ ບໍ່ໃຫ້ມີໂປຣໂມຊັນໃດໆເຂົ້າໃນແພັກເກັດຂອງການຂາຍເລກໝາຍໂທລະສັບໃໝ່;

1.3. ຖ້າບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດໃດ ຫາກຈັດຕັ້ງປະຕິບັດການຂຶ້ນທະບຽນເລກໝາຍໂທລະສັບ ບໍ່ຖືກຕ້ອງ ແລະ ບໍ່ສຳເລັດ ຈະບໍ່ໄດ້ຮັບ ອະນຸຍາດນະໂຍບາຍໃດໆ ທີ່ຕິດພັນກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ຈະຖືກດຳເນີນມາດຕະການປັບໃໝ ຕາມກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປີ 2021) ແລະ ບັນດານິຕິກຳອື່ນທີ່ກ່ຽວຂ້ອງ;

1.4. ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຂັ້ນແຂວງ/ນະຄອນຫຼວງ ແລະ ເມືອງ/ນະຄອນ ຕ້ອງຕິດຕາມ, ກວດກາ ແລະ ລາຍງານ ກ່ຽວກັບການຈຳໜ່າຍ ແລະ ເປີດນຳໃຊ້ເລກໝາຍໂທລະສັບໃໝ່ ໂດຍໃຫ້ຮັບປະກັນການຂຶ້ນທະບຽນຢ່າງຖືກຕ້ອງ ຂອງບັນດາສາຂາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ ເປັນປະຈຳເດືອນ, ປະຈຳໄຕມາດ, ປະຈຳປີ ແລະ ຮູບແບບເລັ່ງດ່ວນຕາມຄວາມຈຳເປັນ.

**2. ເລກໝາຍໂທລະສັບທີ່ນຳໃຊ້ແລ້ວ ກ່ອນຄຳສັ່ງສະບັບນີ້ ແຕ່ຍັງບໍ່ທັນຂຶ້ນທະບຽນ ກໍ່ຕ້ອງສືບຕໍ່ຂຶ້ນທະບຽນໃຫ້ສຳເລັດຕາມວິທີການດັ່ງລຸ່ມນີ້:**

2.1 ບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງກວດກາຂໍ້ມູນຂອງຜູ້ໃຊ້ ເລກໝາຍໂທລະສັບມືຖື ແບບລາຍເດືອນ ແລະ ແບບຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030 ທີ່ເປັນຂອງ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ກ່ອນຄຳສັ່ງສະບັບນີ້ ແຕ່ຍັງບໍ່ທັນ

ໄດ້ຂຶ້ນທະບຽນ ເພື່ອຊຸກຍູ້ໃຫ້ຜູ້ນໍາໃຊ້ມາຂຶ້ນທະບຽນເລກໝາຍໂທລະສັບໃຫ້ຖືກຕ້ອງ ແລະ ສໍາເລັດ **ກ່ອນວັນທີ 16 ທັນວາ 2023** ຜ່ານແອັບພລີເຄຊັນ 3 ແກຼັບ (3 Grab App) ແລະ ລາວ ເຄວາຍຊີ (Lao KYC App);

2.2 ຖ້າບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຫາກປະຕິບັດການຂຶ້ນທະບຽນເລກໝາຍໂທລະສັບ ບໍ່ຖືກຕ້ອງ ແລະ ບໍ່ສໍາເລັດ ຈະບໍ່ໄດ້ຮັບອະນຸຍາດນະໂຍບາຍໃດໆ ທີ່ຕິດພັນກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ຈະຖືກດໍາເນີນມາດຕະການປັບໃໝ ຕາມກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປີ 2021) ແລະ ບັນດານິຕິກໍາອື່ນທີ່ກ່ຽວຂ້ອງ;

2.3 ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຂັ້ນແຂວງ/ນະຄອນຫຼວງ ແລະ ເມືອງ/ນະຄອນ ຕ້ອງຊຸກຍູ້ ບັນດາສາຂາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ຈັດຂະບວນການຂຶ້ນທະບຽນ ເລກໝາຍໂທລະສັບທີ່ເປີດນໍາໃຊ້ກ່ອນຄໍາສັ່ງສະບັບນີ້ປະກາດນໍາໃຊ້ ພ້ອມທັງຮັບປະກັນການຊຸກຍູ້ ໃຫ້ຜູ້ນໍາໃຊ້ ຂຶ້ນທະບຽນເລກໝາຍໂທລະສັບຂອງຕົນ ໃຫ້ຖືກຕ້ອງ ແລະ ສໍາເລັດ ກ່ອນວັນທີ 16 ທັນວາ 2023.

## 3. ການຈັດຕັ້ງປະຕິບັດ

3.1. ມອບໃຫ້ ຫ້ອງການກະຊວງ ເຕັກໂນໂລຊີ ແລະ ການສື່ສານ ອອກແຈ້ງການໃຫ້ທົ່ວສັງຄົມຮັບຊາບກ່ຽວກັບ ການສືບຕໍ່ປະຕິບັດການຂຶ້ນທະບຽນເລກໝາຍໂທລະສັບມືຖື ແບບລາຍເດືອນ ແລະ ແບບຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030 ໃຫ້ຖືກຕ້ອງ ແລະ ສໍາເລັດ ຕາມກົດໝາຍ ແລະ ລະບຽບການວາງອອກ;

3.2. ມອບໃຫ້ ອົງການຄຸ້ມຄອງໂທລະຄົມມະນາຄົມ ຈັດຕັ້ງເຜີຍແຜ່ ຄໍາສັ່ງສະບັບນີ້ໃຫ້ແກ່ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ແລະ ບັນດາບໍລິສັດຜູ້ໃຫ້ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ຮັບຊາບຢ່າງທົ່ວເຖິງ ແລະ ພ້ອມກັນຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ຢ່າງເຂັ້ມງວດ ໃຫ້ໄດ້ຮັບຜົນດີ ພ້ອມທັງຕິດຕາມ, ກວດກາ, ປະເມີນຜົນ ແລະ ສັງລວມລາຍງານໃຫ້ຄະນະນໍາກະຊວງ ຮັບຊາບຢ່າງເປັນປົກກະຕິ ປະຈໍາເດືອນ ແລະ ປະຈໍາ 6 ເດືອນ ເພື່ອຂໍທິດຊີ້ນໍາໃນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ;

3.3. ມອບໃຫ້ ອົງການຄຸ້ມຄອງໂທລະຄົມມະນາຄົມ ສົມທົບກັບກົມກ່ຽວຂ້ອງພາຍໃນກະຊວງ ເພື່ອດໍາເນີນມາດຕະການຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມຂໍ້ຕົກລົງຂອງທ່ານລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ວ່າດ້ວຍ ການຂຶ້ນທະບຽນເລກໝາຍໂທລະສັບ, ເລກທີ 2347/ກຕສ, ວັນທີ 30 ສິງຫາ 2023;

3.4. ມອບໃຫ້ ອົງການຄຸ້ມຄອງໂທລະຄົມມະນາຄົມ ສົມທົບກັບ ບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ສ້າງແຜນປິດເລກໝາຍໂທລະສັບມືຖື ແບບລາຍເດືອນ ແລະ ແບບຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິ

ການຂຶ້ນຕົ້ນດ້ວຍ 030 ທີ່ເປີດນຳໃຊ້ກ່ອນຄຳສັ່ງສະບັບນີ້ ແຕ່ຍັງບໍ່ໄດ້ຂຶ້ນທະບຽນ ແລະ ໃຫ້ຮັບປະກັນການປິດເລກໝາຍໂທລະສັບທີ່ບໍ່ຂຶ້ນທະບຽນ ໃຫ້ສຳເລັດກ່ອນວັນທີ 16 ທັນວາ 2023;

3.5. ມອບໃຫ້ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ເຜີຍແຜ່ຄຳສັ່ງສະບັບນີ້ໃຫ້ແກ່ຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ເມືອງ/ນະຄອນ ແລະ ບັນດາສາຂາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ຮັບຊາບ ພ້ອມທັງສົມທົບເປັນເຈົ້າການໃນການຕິດຕາມການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ໃຫ້ໄດ້ຮັບຜົນດີ ແລະ ລາຍງານຜົນການຈັດຕັ້ງປະຕິບັດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີ ຫາ ອົງການຄຸ້ມຄອງໂທລະຄົມມະນາຄົມ ເພື່ອຮັບຊາບ ຢ່າງເປັນປົກກະຕິ ປະຈຳເດືອນ ແລະ ປະຈຳ 6 ເດືອນ;

3.6. ມອບໃຫ້ ບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຈັດຕັ້ງເຜີຍແຜ່ຄຳສັ່ງສະບັບນີ້ ໃຫ້ແກ່ ບັນດາສາຂາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ຈຸດບໍລິການຂອງຕົນໃນຂອບເຂດທົ່ວປະເທດໃຫ້ຮັບຊາບ ເພື່ອພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ລາຍງານຜົນການຈັດຕັ້ງປະຕິບັດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີ ຫາອົງການຄຸ້ມຄອງໂທລະຄົມມະນາຄົມ ເພື່ອຮັບຊາບຢ່າງເປັນປົກກະຕິ, ປະຈຳເດືອນ ແລະ ປະຈຳ 6 ເດືອນ;

3.7. ມອບໃຫ້ ບໍລິສັດຜູ້ໃຫ້ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເກັບກຳຂໍ້ມູນລະອຽດ ຂອງການຈັດສັນ ເລກໝາຍໂທລະສັບມືຖື ແບບລາຍເດືອນ ແລະ ແບບຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030 ໃຫ້ບັນດາຈຸດບໍລິການຂອງຕົນ ກ່ອນຈຳໜ່າຍໃຫ້ແກ່ສັງຄົມ;

3.8. ມອບໃຫ້ ບັນດາບໍລິສັດຜູ້ໃຫ້ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ລາຍງານ ລະອຽດທຸກເລກໝາຍໂທລະສັບມືຖື ແບບລາຍເດືອນ ແລະ ແບບຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030 ທີ່ມີການນຳໃຊ້ຢູ່ໃນປະຈຸບັນ ກ່ອນຄຳສັ່ງສະບັບນີ້ ໃຫ້ອົງການຄຸ້ມຄອງໂທລະຄົມມະນາຄົມ ເພື່ອຮັບຊາບ ແລະ ເປັນຂໍ້ມູນອ້າງອີງ. ໃຫ້ອົງການຄຸ້ມຄອງໂທລະຄົມມະນາຄົມ ເກັບຮັກສາຂໍ້ມູນດັ່ງກ່າວໄວ້ເປັນຄວາມລັບ ຕາມທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍການໂທລະຄົມມະນາຄົມ.

**4.** ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ບໍ່ວຽງຄຳ ວົງດາລາ